**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ ..14....../ຈຂ.ອປ

ອັດຕະປື, ວັນທີ.02.ພະຈິກ.2017

# ຄໍາສັ່ງ

**ວ່າດ້ວຍການຈັດຕັ້ງປະຕິບັດຄໍາສັ່ງເລກທີ 43/ນຍ ສະບັບລົງວັນທີ 23/08/2016 ວ່າດ້ວຍການວາງທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.**

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ: ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງຄັ້ງທີ 5 ສະໄໝ X ທີ່ຈັດຂຶ້ນລະຫວ່າງວັນທີ 11-13 ຕຸລາ 2017.
- ອີງຕາມ: ໃບສະເໜີຂອງພະແນກພາຍໃນແຂວງ ສະບັບເລກທີ 149/ພພນ ລົງວັນທີ 25 ຕຸລາ 2017.

**ເຈົ້າແຂວງອອກຄໍາສັ່ງ:**

## I. ຈຸດປະສົງ

ເພື່ອຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014, ຄໍາສັ່ງເລກທີ 34/ນຍ, ລົງວັນທີ 23/08/2016 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງເປັນຫົງໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ. ເຂົ້າສູ່ລວງເລິກ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານຕາມ 4 ເນື້ອໃນ 4 ຄາດໝາຍໃຫ້ປະກົດຜົນເປັນຈິງ ທັງເປັນເຈົ້າການໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ສູນກາງພັກ ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ x ຂອງອົງຄະນະພັກແຂວງ ຕາມທິດສູ້ຊົນແຕ່ປີນີ້ຫາປີ 2020 ແລະ ຜັນຂະຫຍາຍບົດຮຽນດ້ານດີ, ແກ້ໄຂດ້ານຄົງຄ້າງໃນການຈັດຕັ້ງປະຕິບັດ ການເຮັດທົດລອງວຽກງານ 3 ສ້າງ ໃນໄລຍະຜ່ານມາ.

## II. ເນື້ອໃນຄໍາສັ່ງ

1. ໃຫ້ບັນດາທ່ານຫົວໜ້າພະແນກການ, ຫົວໜ້າຫ້ອງການທຽບເທົ່າ, ຫົວໜ້າກອງບັນຊາການ ປກຊ, ຫົວໜ້າກອງບັນຊາການ ປກສ ແຂວງ ແລະ ເຈົ້າເມືອງ 5 ຕົວເມືອງ ໃນທົ່ວແຂວງເອົາໃຈໃສ່ນໍາພາ - ຊີ້ນໍາການຈັດຕັ້ງຄົ້ນຄວ້າຮໍ່າຮຽນເຊື່ອມຊຶມ ແລະ ກໍາແໜ້ນມະຕິກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014, ຄໍາສັ່ງເລກທີ 34/ນຍ, ລົງວັນທີ 23/08/2016 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງເປັນຫົງໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ຄໍາແນະນໍາ ເລກທີ 02/ພນ ຂອງກະຊວງພາຍໃນ ໃນການຈັດຕັ້ງປະຕິບັດຄໍາສັ່ງຂອງນາຍົກ ແລະ ຄໍາສັ່ງຂອງເຈົ້າແຂວງສະບັບນີ້ຢ່າງເລິກເຊິ່ງເຖິງຖອງ ແລະ ທົ່ວເຖິງ ຕິດພັນກັນກັບການເຜີຍແຜ່ບົດຮຽນທີ່ຖອດຖອນໄດ້ຈາກການເຮັດທົດລອງວຽກງານ 3 ສ້າງ ຂອງຂະແໜງການ ອົງການ ແລະ ທ້ອງຖິ່ນຂອງຕົນໃຫ້ສໍາເລັດໃນເດືອນ 11 ປີ 2017, ເພື່ອແນໃສ່ເຮັດໃຫ້ຄະນະ

ພັກ, ສະມາຊິກພັກ, ພະນັກງານ ລັດຖະກອນນັບແຕ່ຂັ້ນພະແນກການ, ອົງການອ້ອມຂ້າງແຂວງ, ເມືອງລົງຮອດຮາກຖານບ້ານ ໄດ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ສ້າງຄວາມເປັນເອກະພາບສູງໃນການຈັດ ຕັ້ງປະຕິບັດ.

2. ເພື່ອເຮັດໃຫ້ມະຕິ ເລກທີ 25 ຂອງກົມການເມືອງ, ຄຳສັ່ງເລກທີ 34 ຂອງນາຍົກລັດຖະມົນຕີ ແລະ ຄຳສັ່ງຂອງເຈົ້າແຂວງສະບັບນີ້ໃຫ້ສອດຄ່ອງກັບສະພາບຈຸດພິເສດຕົວຈິງຂອງພະແນກການ, ອົງການ ແລະ ທ້ອງຖິ່ນຮາກຖານຕົນ ໂດຍວາງຄາດໝາຍສູ້ຊົນແຕ່ລະດ້ານໃຫ້ຈະແຈ້ງ ເພື່ອຈັດຕັ້ງປະຕິບັດແຕ່ລະປີ ໃຫ້ປະກົດຜົນເປັນຈິງລະອຽດດັ່ງນີ້:

2.1. ມອບໃຫ້ພະແນກການ, ອົງການທຽບເທົ່າ ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງອອກຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ, ເຮັດເປັນປຶ້ມຄູ່ມື, ກຳນົດແຜນຍຸດທະສາດເພື່ອແບ່ງຂັ້ນຄຸ້ມຄອງ, ມອບວຽກ, ມອບຄວາມຮັບຜິດຊອບ ແລະ ແບ່ງຜົນປະໂຫຍດລະຫວ່າງພະແນກການ, ອົງການຂອງແຂວງ ກັບຫ້ອງການ, ອົງ ການສາຍຕັ້ງຂອງຕົນຢູ່ຂັ້ນເມືອງໃຫ້ລະອຽດຈະແຈ້ງ ແລະ ພ້ອມທັງຊ່ວຍເມືອງສ້າງເມືອງໃຫ້ເປັນເມືອງເຂັ້ມແຂງຮອບດ້ານ ແລະ ສ້າງບ້ານໃຫ້ກາຍເປັນຫົວໜ່ວຍພັດທະນາໃຫ້ຖືກຕ້ອງຕາມທິດທາງ, ມາດຕະຖານ ລວມ ທີ່ໄດ້ກຳນົດໄວ້ໃນມະ ຕິຂອງກົມການເມືອງສູນກາງພັກສະບັບເລກທີ 25/ກມສພ ແລະ ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນຮາກຖານ;

2.2. ມອບໃຫ້ພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປືໃຫ້ເປັນຫົວໜ່ວຍຍຸດທະສາດໃນ 5 ປີຕໍ່ໜ້າ ແລະ ຮອດປີ 2025 , 2030 ໂດຍເລັ່ງໃສ່ 7 ດ້ານຄື:

ມອບໃຫ້ຄະນະຈັດຕັ້ງ, ຄະນະກວດກາ ແລະ ຄະນະໂຄສະນາອົບຮົມແຂວງ ແລະ ທຸກພາກສ່ວນຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານການກໍ່ສ້າງພັກ, ພະນັກງານ; ສູ້ຊົນສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານໃຫ້ມີປະສິດທິຜົນ.

2.3 ມອບໃຫ້ພະແນກພາຍໃນແຂວງ ຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານການປົກຄອງ ແລະ ການບໍລິຫານລັດດ້ວຍກົດໝາຍທີ່ສັກສິດ ໂດຍສົມທົບກັບທຸກພາກສ່ວນ ກຳນົດແຜນຍຸດທະສາດ.

- ມອບໃຫ້ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສະຫະກຳ ແລະ ການຄ້າ, ພະແນກກະສິກຳ-ປ່າໄມ້ແຂວງ ຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປືໃຫ້ເປັນຫົວໜ່ວຍຍຸດທະສາດ ໃນການຊຸກດັນການຂະຫຍາຍຕົວຂອງເສດຖະກິດຂອງແຂວງ ໂດຍມີຍຸດທະສາດ ແລະ ມີແຜນພັດທະນາ, ມີທິດກຳນົດໃນການຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງໃນດ້ານຕ່າງໆທີ່ຢູ່ພາຍໃນແຂວງ ໃຫ້ໄດ້ຮັບການນຳໃຊ້ຢ່າງຄຸ້ມຄ່າ ແລະ ຍືນຍົງ; ຊຸກຍູ້ທຸກທ່າແຮງເສດຖະກິດກາຍເປັນສິນຄ້າຕາມຕະຫຼາດຮອງຮັບ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ.

- ມອບໃຫ້ພະແນກການເງິນແຂວງ ຮີບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານການເງິນ, ຕອບສະໜອງງົບປະມານລົງໃສ່ແຜນຈຸດສຸມ ໂດຍສົມທົບກັບພາກສ່ວນຕ່າງໆ ປະຕິບັດວິໄນງົບປະມານ ແລະ ມອບງົບປະມານຖືກຕ້ອງຕາມລະບຽບການ.

2.4. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ພະແນກເຕັກໂນໂລຢີແຂວງຮີບຮ້ອນຄົ້ນຄວ້າ ແລະ ກຳນົດແຜນຍຸດທະສາດ, ຄູ່ມືຂອງຕົນໃນການຜັນຂະຫຍາຍທິດທາງ, ມາດຖານ, ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານການຄຸ້ມຄອງ, ການຂຸດຄົ້ນການ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ, ພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ, ພື້ນຖານວັດຖຸ-ເຕັກນິກ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍກຳນົດຢ່າງເຂັ້ມງວດ.

2.5. ມອບໃຫ້ພະແນກສຶກສາທິການ ແລະ ກິລາ, ພະແນກສາທາລະນະສຸກ, ພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ ຮັບຮ້ອນຄົ້ນຄວ້າ ແລະ ຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດກຳນົດແຜນຍຸດທະສາດຂອງຕົນ ແລະ ຄູ່ມືທາງດ້ານການຄຸ້ມຄອງວັດທະນະທຳ-ສັງຄົມ ແລະ ພັດທະນາຊັບພະຍາກອນມະນຸດ.

2.6. ມອບໃຫ້ກອງບັນຊາການປ້ອງກັນຊາດ, ປ້ອງກັນຄວາມສະຫງົບແຂວງ, ຮັບຮ້ອນຄົ້ນຄວ້າ ແລະຜັນຂະຫຍາຍທິດທາງ, ມາດຖານ ແລະ ມາດຕະການໃນການສ້າງແຂວງອັດຕະປື ໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານການປ້ອງກັນຊາດ, ປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ.

ພ້ອມກັນນີ້ ມອບໃຫ້ບັນດາພະແນກການ, ອົງການ, ກອງບັນຊາການປ້ອງກັນຊາດ, ປ້ອງກັນຄວາມສະຫງົບແຂວງ ຕ້ອງກວດກາ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງ, ເຮັດເປັນປຶ້ມຄູ່ມື, ກຳນົດແຜນຍຸດທະສາດ ດ້ານການຜັນຂະຫຍາຍມະຕິ 3 ສ້າງ, ມອບວຽກ ມອບຄວາມຮັບຜິດຊອບ ແລະ ຜົນປະໂຫຍດທີ່ເໝາະສົມໃຫ້ແກ່ເມືອງໃຫ້ລະອຽດຈະແຈ້ງ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ເມືອງ ສາມາດສ້າງຕົນເອງ ໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ສ້າງບັນດາບ້ານ ໃຫ້ກາຍເປັນບ້ານພັດທະນາ, ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາແຂວງ, ປະເທດໃຫ້ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໃນປີ 2020.

2.7. ມອບໃຫ້ບັນດາພະແນກການ, ອົງການ, ກອງບັນຊາການປ້ອງກັນຊາດ, ປ້ອງກັນຄວາມສະຫງົບແຂວງຮັບຮ້ອນຊີ້ນຳ ແລະ ຊ່ວຍເມືອງໃນການຄົ້ນຄວ້າ ແລະ ຜັນຂະຫຍາຍການສ້າງເມືອງ ໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໂດຍສຸມໃສ່ 5 ດ້ານດັ່ງນີ້:

- ດ້ານການກໍ່ສ້າງພັກ, ພະນັກງານ.
- ດ້ານການປົກຄອງ ແລະ ການບໍລິຫານລັດ ດ້ວຍກົດໝາຍທີ່ສັກສິດ.
- ດ້ານເສດຖະກິດ-ການເງິນ ຊັບສິນຂອງລັດ, ການປົກປັກຮັກສາ, ການຂຸດຄົ້ນ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ ແລະ ຍືນຍົງ.
- ດ້ານວັດທະນະທຳ-ສັງຄົມ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮັບປະກັນດ້ານຈັນຍາບັນ ແລະ ສີມືແຮງງານຢ່າງມີຄຸນນະພາບ.
- ດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃຫ້ມີຄວາມເຂັ້ມແຂງ, ມີຄວາມເປັນລະບຽບຮຽບຮ້ອຍ.

ພ້ອມກັນນັ້ນ ມອບໃຫເມືອງ 3 ສ້າງໃນເມື່ອກ່ອນ ກວດກາຄືນ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງໃຫ້ບ້ານ ໃຫ້ລະອຽດຈະແຈ້ງ. ສຳລັບເມືອງທີ່ບໍ່ນອນໃນເມືອງ 3 ສ້າງໃນເມື່ອກ່ອນນັ້ນ ກໍ່ໃຫ້ຮັບຮ້ອນຄົ້ນຄວ້າ ແລະຈັດການ ແບ່ງຂັ້ນຄຸ້ມຄອງໃຫ້ບ້ານໃຫ້ລະອຽດຈະແຈ້ງ ເພື່ອສ້າງໃຫ້ບ້ານ ກາຍເປັນຫົວໜ່ວຍພັດທະນາທີ່ມີຄຸນນະພາບ ແລະ ປະສິດທິຜົນ ຕາມມາດຕະຖານທີ່ກຳນົດໃນແຕ່ລະໄລຍະ.

ຄາດໝາຍສູ້ຊົນ ແຕ່ນີ້ຫາປີ 2020 ທົ່ວແຂວງ ຈະສູ້ຊົນສ້າງເມືອງ ໃຫ້ກາຍເປັນເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 2 ເມືອງຄື: ເມືອງສາມັກຄີໄຊ, ເມືອງໄຊເສດຖາ.

2.8. ມອບໃຫ້ເຈົ້າເມືອງ ແຕ່ລະເມືອງ ຮັບຮ້ອນຄົ້ນຄວ້າ ແລະ ຊີ້ນຳບ້ານ ເພື່ອຜັນຂະຫຍາຍການສ້າງບ້ານ ເປັນຫົວໜ່ວຍພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ ໃນທົ່ວເມືອງຂອງຕົນດັ່ງນີ້:

2.9. ມອບໃຫ້ເຈົ້າເມືອງສ້າງແຜນການ ດ້ວຍມາດຕາຖານຕ່າງໆ, ສ້າງຊົນນະບົດຈຸດສຸມ ກາຍເປັນຕົວເມືອງນ້ອຍຈຸດໃດໜຶ່ງ ແລະ ປະກາດໃຊ້ ຈັດຕັ້ງປະຕິບັດຕາມມາດຖານຂອງຂັ້ນເທິງວາງອອກ ແລະ ແຜນສ້າງລາຍຮັບໃຫ້ເມືອງ, ບ້ານມີລາຍຮັບເຮັດຫຍັງແດ່. ຕົວຢ່າງ: ຕ້ອງດຶງດູດການລົງທຶນ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ.

- ສຳລັບ 3 ເມືອງ ທີ່ເປັນເມືອງເຮັດທົດລອງ 3 ສ້າງ ໃຫ້ປະເມີນຄືນໃໝ່ ການປະກາດບ້ານພັດທະນາ ໃນໄລຍະທີ່ຜ່ານມາ ວ່າມັນໄດ້ຕາມມາດຕະຖານທີ່ຂັ້ນເທິງວາງອອກແລ້ວຫຼືຍັງ, ຖ້າເຫັນວ່າມາດຖານໃດຍັງບໍ່ທັນຄົບເງື່ອນໄຂ ກໍ່ຕ້ອງສຸມໃສ່ປັບປຸງແກ້ໄຂໃຫ້ຄົບຕາມມາດຕະຖານຂອງຂັ້ນເທິງວາງອອກ. ເຮັດແນວນັ້ນ ກໍ່ເພື່ອເຮັດໃຫ້ບ້ານພັດທະນາມີຄວາມຮັບປະກັນດ້ານຄຸນນະພາບ ສາມາດເປັນບ້ານຕົວແບບໃຫ້ແກ່ບ້ານອື່ນໆ.

- ຄົ້ນຄວ້າ ແລະ ຜັນຂະຫຍາຍບົດຮຽນ ການເຮັດທົດລອງ ການສ້າງບ້ານພັດທະນາໃນ 3 ເມືອງນັ້ນ ເພື່ອນຳໄປຈັດຕັ້ງປະຕິບັດຢູ່ທຸກເມືອງ. ມອບໃຫ້ແຕ່ລະເມືອງກຳນົດບ້ານເປົ້າໝາຍຈຸດສຸມ ເພື່ອສ້າງເປັນບ້ານພັດທະນາໃນຕໍ່ໜ້າ ( ໃນປີ 2017-2020 ແລະ ໃນແຕ່ລະປີ ) ໃຫ້ລະອຽດຈະແຈ້ງ, ໂດຍເລັ່ງໃສ່ບ້ານໃນເທດສະບານເມືອງ ແລະ ບ້ານທີ່ມີເງື່ອນໄຂຄົບຖ້ວນ ບ້ານເປົ້າໝາຍລຶບລ້າງຄວາມທຸກຍາກ ເພື່ອກຳນົດເປັນເປົ້າໝາຍຈຸດສຸມໃນການສ້າງບ້ານພັດທະນາຂອງແຕ່ລະເມືອງໃຫ້ເກີດດອກອອກຜົນ.

- ການສ້າງບ້ານພັດທະນາ ຕ້ອງຮັບປະກັນໃນ 4 ດ້ານຄື:

+ ພັດທະນາລະບົບການເມືອງ ປະຊາທິປະໄຕ ປະຊາຊົນພາຍໃນບ້ານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມ ແຂງ, ປອດໃສ ຕິດພັນກັບການຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ;

+ ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍການຜະລິດສິນຄ້າ ແລະ ການບໍລິການທີ່ດີ, ເປັນບ້ານທີ່ສາມາດສ້າງກອງທຶນພັດທະນາ ຮັບປະກັນໃນດ້ານລາຍຮັບ ລາຍຈ່າຍ, ສາມາດກຸ້ມຕົນເອງໃນການບໍລິຫານຂັ້ນບ້ານ;

+ ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍວັດທະນະທຳ-ສັງຄົມທີ່ດີງາມ ຂອງລະບອບປະຊາທິປະໄຕ ປະ ຊາຊົນ ປັບປຸງແກ້ໄຂວັດທະນະທຳຊອດກະຈາ ແລະ ການເຊື່ອຖືງົມງວາຍທີ່ບໍ່ມີຜົນດີໃຫ້ແກ່ການພັດ ທະນາ;

+ ພັດທະນາບ້ານ ໃຫ້ກາຍເປັນຫົວໜ່ວຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ, ເປັນບ້ານປ້ອມໝັ້ນສູ້ຣົບ ແລະ ກຸ່ມບ້ານສູ້ຮົບຕິດລຽນ.

ຄາດໝາຍສູ້ຊົນ ແຕ່ນີ້ຫາປີ 2020 ທົ່ວແຂວງຕ້ອງສູ້ຊົນສ້າງບ້ານ ໃຫ້ກາຍເປັນບ້ານພັດທະນາໃຫ້ໄດ້ທັງໝົດ 2/3 ຂອງຈຳນວນບ້ານໃນທົ່ວແຂວງ ລາຍລະອຽດໃນແຕ່ລະເມືອງມີດັ່ງນີ້:

+ ເມືອງສາມັກຄີໄຊ ໃຫ້ກວດກາຄືນບ້ານພັດທະນາທີ່ໄດ້ປະກາດໄປແລ້ວ 14 ບ້ານ ແລະ ສືບຕໍ່ສ້າງບ້ານພັດທະນາແຕ່ນີ້ຫາປີ 2020 ໃຫ້ໄດ້ຕື່ມອີກ 5 ບ້ານ;

+ ເມືອງຊານໄຊ ໃຫ້ກວດກາຄືນບ້ານພັດທະນາທີ່ໄດ້ປະກາດໄປແລ້ວ 5 ບ້ານ ແລະ ສືບຕໍ່ສ້າງບ້ານພັດທະນາແຕ່ນີ້ຫາປີ 2020 ໃຫ້ໄດ້ຕື່ມອີກ 23 ບ້ານ;

+ ເມືອງໄຊເສດຖາ ໃຫ້ກວດກາຄືນບ້ານພັດທະນາທີ່ໄດ້ປະກາດໄປແລ້ວ 15 ບ້ານ ແລະ ສືບຕໍ່ສ້າງບ້ານພັດທະນາແຕ່ນີ້ຫາປີ 2020 ໃຫ້ໄດ້ຕື່ມອີກ 7 ບ້ານ;

+ ເມືອງພູວົງ ໃຫ້ກວດກາຄືນບ້ານພັດທະນາທີ່ໄດ້ປະກາດໄປແລ້ວ 9 ບ້ານ ແລະ ສືບຕໍ່ສ້າງບ້ານພັດທະນາແຕ່ນີ້ຫາປີ 2020 ໃຫ້ໄດ້ຕື່ມອີກ 3 ບ້ານ;

+ ເມືອງສະໜາມໄຊ ໃຫ້ກວດກາຄືນບ້ານພັດທະນາທີ່ໄດ້ປະກາດໄປແລ້ວ 18 ບ້ານ ແລະ ສືບຕໍ່ສ້າງບ້ານພັດທະນາແຕ່ນີ້ຫາປີ 2020 ໃຫ້ໄດ້ຕື່ມອີກ 9 ບ້ານ;

- ມອບໃຫ້ບັນດາເມືອງ ສືບຕໍ່ຄົ້ນຄວ້າ ປັບປຸງການເຕົ້າໂຮມບ້ານນ້ອຍ ໃຫ້ເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ ໃຫ້ເປັນສີສັນຕົວເມືອງໃນຊົນນະບົດ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຕົວຈິງແຕ່ລະພື້ນທີ່ຂອງເມືອງ.

- ມອບໃຫ້ບັນດາເມືອງ ສ້າງແຜນຂອງຕົນ ຈະເຮັດແນວໃດໃຫ້ມີຄວາມເຂັ້ມແຂງເປັນຕົ້ນ: ດ້ານການເມືອງ, ດ້ານວິຊາການ, ດ້ານພາຫະນະ, ແຫຼ່ງລາຍຮັບ-ລາຍຈ່າຍ, ແຫຼ່ງອື່ນໆ ເພື່ອສ້າງທ່າແຮງໃຫ້ເມືອງມີຄວາມເຂັ້ມແຂງ.

ການເຕົ້າໂຮມບ້ານນ້ອຍໃຫ້ເປັນບ້ານໃຫຍ່ ຕ້ອງຮັບປະກັນການຈັດສັນທີ່ດິນຕັ້ງພູມລຳເນົາຄົງທີ່, ຮັບປະກັນການຈັດສັນທີ່ດິນທຳມາຫາກິນຖາວອນ ແລະ ອາຊີບຄົງທີ່ໃຫ້ແຕ່ລະຄອບຄົວ ເພື່ອໃຫ້ເຂົາເຈົ້າມີຄວາມອຸ່ນອ່ຽນ, ໝັ້ນໃຈທຳການຜະລິດສິນຄ້າ, ທຳມາຫາກິນ ແລະ ດຳລົງຊີວິດໃຫ້ດີຂຶ້ນກວ່າເກົ່າ;

ຄາດໝາຍສູ້ຊົນແຕ່ນີ້ຫາປີ 2020 ທົ່ວແຂວງຕ້ອງສູ້ຊົນສ້າງບ້ານໃຫຍ່ ໃຫ້ກາຍເປັນສີສັນຕົວເມືອງໃນຊົນນະບົດຢູ່ແຕ່ລະເມືອງໃຫ້ໄດ້ 1-2 ແຫ່ງ.

2.10. ມອບໃຫ້ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ແລະ ບັນດາເມືອງ ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອເອົາເຂົ້າແຜນງົບປະມານລວມປົກກະຕິ ປະຈຳປີຂອງຕົນ ເພື່ອຈັດຕັ້ງປະຕິບັດ. ມອບໃຫ້ພະແນກການເງິນແຂວງ ເປັນຜູ້ຊ່ວຍແນະນຳກ່ຽວກັບການຈັດສັນງົບປະ ມານເຂົ້າໃສ່ວຽກງານ 3 ສ້າງຂອງພະແນກການ ແລະ ທ້ອງຖິ່ນຕົນໃນແຕ່ລະປີໃສ່ບັນດາຈຸດສຸມ ໃຫ້ເກີດຜົນຕົວຈິງ.

2.11. ມອບໃຫ້ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ແລະ ບັນດາເມືອງໃນທົ່ວແຂວງ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້; ພ້ອມທັງປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງຕົນໃນແຕ່ລະໄລຍະ ແລ້ວລາຍງານໃຫ້ກອງເລຂາສາມສ້າງຂັ້ນແຂວງ (ພະແນກພາຍໃນແຂວງ ) ເພື່ອກອງເລຂາສັງລວມ ແລະ ລາຍງານໃຫ້ເຈົ້າແຂວງຮັບຊາບ ຢ່າງເປັນປົກກະຕິ. ໃນເວລາຈັດຕັ້ງປະຕິບັດຕ້ອງເອົາໃຈໃສ່ປະສານສົມທົບລະຫວ່າງບັນດາພະແນກການ, ອົງການສາຍຂວາງອ້ອມຂ້າງແຂວງດ້ວຍກັນ ຫຼືກັບສາຍຕັ້ງຂອງຕົນຢູ່ຂັ້ນເມືອງໃຫ້ມີຄວາມເປັນເອກະພາບ ແລະ ກົມກຽວກັນໃນການວາງແຜນ ແລະ ຕົກລົງບັນຫາຕ່າງໆ. ພ້ອມກັນນີ້ ຖ້າມີບັນຫາໃດຫຍຸ້ງຍາກ ຕ້ອງການຂໍຄຳເຫັນຊີ້ນຳຕື່ມ ກໍ່ໃຫ້ລາຍງານຂໍຄຳເຫັນຊີ້ນຳຈາກເຈົ້າແຂວງໃຫ້ທັນເວລາໂດຍຜ່ານກອງ ເລຂາສາມສ້າງ.

3. ມາດຕາການຈັດຕັ້ງປະຕິບັດ

ມອບໃຫ້ກອງບັນຊາການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າ, ຫ້ອງການ, ເຈົ້າເມືອງ 5 ຕົວເມືອງ ສ້າງແຜນຍຸດທະສາດຂອງຕົນ ແລະ ແບ່ງຂັ້ນຄຸ້ມຄອງ 3 ຂັ້ນໃຫ້ຈະແຈ້ງ, ສ້າງປຶ້ມຄູ່ມືອັນລະອຽດ ໃນການຈັດຕັ້ງປະຕິບັດ ໂດຍແມ່ນເລຂາໜ່ວຍພັກ, ຫົວໜ້າພະແນກການ, ອົງການທຽບເທົ່າ, ຫ້ອງ ການອ້ອມຂ້າງແຂວງ, ຫົວໜ້າກອງບັນຊາການປ້ອງກັນຊາດ, ປ້ອງກັນຄວາມສະຫງົບແຂວງ, ເລຂາພັກ-ເຈົ້າເມືອງເປັນເຈົ້າການນຳພາ ແລ້ວຕົກລົງເປັນເອກະພາບພາຍໃນພັກ, ສ້າງປຶ້ມຄູ່ມືໃນການປະຕິບັດ ສົ່ງໄປຍັງພະແນກພາຍໃນແຂວງ, ຫ້ອງວ່າການແຂວງ, ພະແນກແຜນການ ແລະ ການຮ່ວມມືແຂວງ ເພື່ອຕິດຕາມ.

4. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ບ່ອນສົ່ງ:

- ຄະນະປະຈຳພັກແຂວງສະຫາຍລະ 1 ສະບັບ
- ພະແນກການ-ອົງການອ້ອມຂ້າງແຂວງ ບ່ອນລະ 1 ສະບັບ
- ກອງບັນຊາການ ປກຊ ປກສ ແຂວງ ບ່ອນລະ 1 ສະບັບ
- ບັນດາເມືອງ ເມືອງລະ 5 ສະບັບ
- ຫ້ອງການພາຍໃນເມືອງ ເມືອງລະ 1 ສະບັບ
- ສຳເນົາ 1 ສະບັບ

ປອ ບານ ວິຍະເກດ